# ໂຮງຮຽນວັນອາທິດ

**ວັນອາທິດ ທີ 18 ກໍລະກະດາ 2010 (7/18/2010)**

---

## ພລັງຂອງການອ້ອນວອນ

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** 1 ຊາມູເອນ 22:17-20; 23:1-6, 9-13

**<u>ບົດຮຽນນີ້ສາມາດສະທ້ອນຕໍ່ຊີວິດທ່ານໄດ້ຢ່າງໃດ ?</u>**

ບົດຮຽນນີ້ສາມາດຊ່ວຍໃຫ້ກຳລັງໃຈແກ່ທ່ານໃນການສແວງຫາພຣະເຈົ້າແລະຕິດຕາມການຊົງນຳຂອງພຣະອົງຢ່າງບໍ່ສົນໃຈຕໍ່ຜົນທີ່ຈະຕາມມາພາຍຫຼັງ.

**<u>ບົດຮຽນນີ້ເວົ້າກ່ຽວກັບຫຍັງ:</u>**

ບົດຮຽນນີ້ແມ່ນກ່ຽວກັບການຊອກຫາການຊົງນຳຂອງພຣະເຈົ້າໃນທຸກໆການຕັດສິນໃຈຂອງດາວິດ

**<u>ເປັນຫຍັງບົດຮຽນນີ້ຈຶ່ງມີຄວາມສຳຄັນ:</u>**

ຄົນເຮົາໃນທຸກວັນນີ້ແມ່ເຝົ້າມອງເບິ່ງຄົນຂອງພຣະເຈົ້າ ແລະພຣະທັມຄຳສອນຂອງພຣະເຈົ້າຢ່າງດູໝິ່ນປມາດ. ຄຣິສຕຽນເຮົາໄດ້ປະເຊີນໜ້າກັບການດູໝິ່ນປມາດຈາກຄົນອີກກຸ່ມນຶ່ງຍ້ອນຄວາມເຊື່ອຂອງພວກເຂົາ. ເຖິງຢ່າງໃດກໍຕາມ, ບຸກຄົນທີ່ມີຄວາມເຊື່ອສົມຄວນສືບຕໍ່ສແວງນ້ຳພຣະທັຍຂອງເຈົ້າແລະຕິດຕາມການຊົງນຳຂອງພຣະອົງ.

ໃນຖານະທີ່ເປັນສິດຍາພິບານ, ການທີ່ສັງເກດຮູ້ພຣະປະສົງຂອງພຣະເຈົ້າເພື່ອຈະຍົກຍ້າຍໄປທີ່ໃໝ່ໃນການຮັບໃຊ້ນັ້ນບໍ່ແມ່ນເປັນເຣື່ອງງ່າຍດາຍ. ໂດຍສະເພາະແລ້ວກັບການທີ່ມີລູກສາມຄົນເຂົ້າຮ່ວມຢູ່ດ້ວຍກໍເປັນການຍາກໃນການຕັດສິນໃຈ. ຫຼັງຈາກໄດ້ຮັບໃຊ້ໃນໂບດວິຫານນີ້ເປັນເວລາເຖິງສິບປີ. ພວກເຮົາກໍມີໂອກາດໄປຮັບໃຊ້ທີ່ໂບດທີ່ເປັນບ້ານເກີດເມືອງນອນຂອງພັນລະຍາຂ້າພຣະເຈົ້າ. ພວກເຮົາໄດ້ອະທິຖານ, ໄດ້ໄປຢ້ຽມຢາມເມືອງຕ່າງໆ, ແລະພິຈາຣະນາເບິ່ງ ກວດສອບເບິ່ງຢ່າງລະອຽດຖີ່ຖ້ວນ. ໃນທີ່ສຸດອົງພຣະຜູ້ເປັນເຈົ້າໄດ້ສຳແດງໃຫ້ເຫັນວ້າພວກເຮົາຄວນຈາກທີ່ນີ້ໄປອີກສະຖານທີ່ໃໝ່ແລະຮັບໃຊ້ໃນຄຣິສຕະຈັກໃໝ່ອີກ.

ດາວິດໄດ້ປະເຊີນໜ້າກັບຫຼາຍບັນຫາທີ່ແຕກຕ່າງກັນໃນຂະນະທີ່ເພິ່ນໄດ້ຫລົບໜີຈາກກະສັດຊາອູນ. ເພິ່ນຕ້ອງການໆນຳພາຈາກພຣະເຈົ້າເພາະກະສັດຊາອູນໄດ້ວາງແຜນທີ່ຈະທຳຮ້າຍເພິ່ນ. ດາວິດໄດ້ສແວງຫາອົງພຣະຜູ້ເປັນເຈົ້າເພື່ອທີ່ຈະໄດ້ຮັບການຊ່ວຍເຫຼືອ, ແລ້ວພຣະເຈົ້າກໍໄດ້ໃຫ້ການຊ່ວຍເຫຼືອຕາມຄວາມຕ້ອງການ ເພື່ອເຮັດໃຫ້ເພິ່ນມີຄວາມສລາດໃນການຕັດສິນໃຈ.

### <u>ສຶກສາພຣະຄັມພີ</u>

**1. <u>ແຜນການຊາອູນ</u>** 1 ຊາມູເອນ 22: 17-20

ຫຼັງຈາກດາວິດໄດ້ຂ້າໂກລີອາດ, ຊື່ສຽງຂອງລາວເປັນທີ່ນິຍົມຊົມຊອບຫຼາຍຂຶ້ນ ໃນຂະນະທີ່ຊື່ສຽງຂອງຊາອູນກຳລັງຕົກຕ່ຳ. ປະຊາຊົນເລີ້ມໃຫ້ຄວາມນັບຖືກັບດາວິດຫຼາຍຂຶ້ນເຖິງແມ່ນວ່າດາວິດໃຫ້ຄວາມນັບຖືກະສັດຊາອູນເໝືອນດັ່ງເພິ່ນຍັງຢູ່ໃນໜ້າທີ່ຂອງກະສັດ. ຊາອູນມີຄວາມຄິດອິດສາດາວິດແລະຫາວິທີທາງທີ່ຈະຈັບດາວິດ, ແລະມັນເປັນໂອກາດທີ່ຊັກນຳດາວິດໄປຫາອາຮີເມເລັກ, ເປັນຜູ້ປະກາດພຣະທັມທີ່ເມືອງໂນບ. ເມື່ອດາວິດຢູ່ທີ່ນັ້ນ, ດາວິດມີອາ

ການຫິວຈຶ່ງໄດ້ຖາມຜູ້ປະກາດພຣະທັມວ່າມີເຂົ້າຈີ່ກິນບໍ່. ຜູ້ປະກາດພຣະທັມຕອບວ່າເຂົ້າຈີ່ທັມດາບໍ່ມີໆແຕ່ເຂົ້າຈີ່ສັກສິດ( 1 ຊາມູເອນ 21:4 ). ແລ້ວຜູ້ປະກາດພຣະທັມກໍເອົາເຂົ້າຈີ່ສັກສິດນັ້ນໃຫ້ດາວິດ.

ຄົນຮັບໃຊ້ຊາອູນຄົນນຶ່ງ, ຊື່ໂດເອກ, ເປັນຄົນເອໂດມ, ໄດ້ເຫັນເຫດການທີ່ເກີກຂຶ້ນ. ໂດເອກຈຶ່ງລາຍງານຊາອູນເຖິງເຣື່ອງທີ່ຜູ້ປະກາດພຣະທັມອາຮີເມເລັກໄດ້ໃຫ້ການຊ່ວຍເຫຼືອແກ່ດາວິດ, ແລະຊາອູນຈຶ່ງຮຽກຕົວຜູ້ປະກາດພຣະທັມມາເພື່ອສອບຖາມ. ລາວຂູ່ເຂັນອາຮີເມເລັກແລະຄອບຄົວຂອງລາວວ່າພວກເຈົ້າສົມຄວນຕາຍ( 1 ຊາມູເອນ 22:16). ຊາອູນຫັນມາຫາທະຫານຂອງຕົນແລະອອກຄຳສັ່ງວ່າຈົ່ງນຳເອົາເຂົາເຫຼົ່ານີ້ໄປປະຫານຊີວິດ. ເພາະວ່າຜູ້ປະກາດພຣະທັມໄດ້ໃຫ້ຄວາມຊ່ວຍເຫຼືອແກ່ດາວິດໃນເວລາທີ່ລາວໄດ້ຫຼົບໜີຈາກຊາອູນ ແຕ່ທະຫານບໍ່ປະຕິບັດຕາມຄຳສັ່ງ.

ຊາອູນອອກຄຳສັ່ງເຖິງສອງຄັ້ງທີ່ເປັນຄຳສັ່ງທີ່ຂ້ອນຂ້າງໂງ່ງ່າວຕໍ່ທະຫານທີ່ຢູ່ໃຕ້ການບັງຄັບບັນຊາຂອງລາວ(1 ຊາມູເອນ 14: 44-45). ໃນເມື່ອທະຫານບໍ່ປະຕິບັດຕາມຄຳສັ່ງອັນໂງ່ງ່າວຊຶ່ງເປັນການຕັດສິນໃຈທີ່ຂາດການນຳພາຂອງພຣະເຈົ້າຂອງຊາອູນແລ້ວ. ໂດເອກໄດ້ລົງມືຂ້າຜູ້ປະກາດພຣະທັມດ້ວຍຕົວລາວເອງ, ຂ້າທຸກຄົນທີ່ນຸ່ງຮົ່ມເສື້ອຜ້າຂອງຜູ້ປະກາດພຣະທັມ 85 ຄົນແລະຄອບຄົວຂອງພວກເຂົາ. ໃນນັ້ນມີທັງຜູ້ຊາຍ, ຜູ້ຍິງ, ແລະເດັກນ້ອຍ.

ບາງຄັ້ງການກະທຳທີ່ເຫັນວ່າຖືກຕ້ອງກໍມີຄຸນຄ່າສູງ. ຜູ້ປະກາດພຣະທັມໄດ້ເຮັດໃນສິ່ງທີ່ເຂົາຄິດວ່າຖືກຕ້ອງໃນເມືອງໂນບ. ເຂົາໄດ້ໃຫ້ຄວາມຊ່ວຍເຫຼືອແກ່ດາວິດໃນເມື່ອລາວມີຄວາມຕ້ອງການໆຊ່ວຍເຫຼືອ. ຄິດວ່າມັນແມ່ນສິ່ງດີທີ່ຖືກຕ້ອງສົມຄວນຈະຕ້ອງເຮັດ, ແຕ່ເຂົາກັບໄດ້ຮັບຄວາມທຸກທໍຣະມານ, ບາງຄັ້ງຄຣິສຕຽນຂອງເຮົາກໍຕ້ອງໄດ້ຍອມອົດທົນ ເມື່ອມີຜູ້ໃດຜູ້ນຶ່ງໃນກຸ່ມຄຣິສຕຽນທີ່ມີແນວຄວາມຄິດການກະທຳທີ່ອອກນອກລູ້ນອກທາງຫຼືທຳໃຫ້ສະງ່າຣາສີຂອງພຣະເຈົ້າເສັຽຫາຍ. ຜູ້ປະກາດພຣະທັມມີຄວາມຮູ້ຊຶ່ງພາກພູມໃຈໃນການກະທຳທີ່ຖືກຕ້ອງກໍຈິງ, ແຕ່ເຂົາກໍຍັງໄດ້ຮັບຄວາມທົນທຸກທໍຣະມານ. ບາງຄັ້ງການຕິດຕາມພຣະເຈົ້າກໍບໍ່ໄດ້ເປັນເຣື່ອງທີ່ງ່າຍດາຍ.

ລູກຊາຍຄົນນຶ່ງຂອງອາຮີເມເລັກ, ອາບີອາທານ, ໃນຂະນະທີ່ເກີດການເຂັ່ນຂ້າຢ່າງອຶນລະທຶນຫວຸ້ນວາຍຢູ່ນັ້ນລາວໄດ້ຫລົບໜີໄປຫາດາວິດ. ລາວໄດ້ເລົ່າເຣື່ອງທັງໝົດທີ່ເກີດຂຶ້ນໃຫ້ດາວິດຟັງ. ດາວິດໄດ້ເອົາອາບີອາທານໄປຢູ່ນຳລາວແລະໄດ້ສັນຍາວ່າຈະໃຫ້ຄວາມປອດພັຍແກ່ລາວ. ຊາອູນມີຄວາມຄິດແຜນການອັນຊົ່ວຊ້າອີກບໍ່ນານຜົນຮ້າຍກໍຈະກັບມາຕົກໃສ່ຕົວລາວເອງ.

## 2.<u>ດາວິດອ້ອນວອນ</u> 1 ຊາມູເອນ 23: 1-5

ຄົນຟີລິສຕິນໄດ້ສູ້ຮົບກັບເມືອງເກເອລາຢູ່. ດາວິດປະເຊີນກັບຄວາມຈົນຕາແຈ. ລາວຄວນລະເລີຍຕໍ່ການບຸກໂຈມຕີຂອງຟີລິສຕິນຍ້ອນວ່າລາວກໍມີບັນຫາຂອງລາວເອງຄືບັນຫາກັບກະສັດຊາອູນ? ຫຼືວ່າລາວຄວນບຸກໂຈມຕີຕໍ່ສູ້ກັບຟີລິສຕິນແລະສ່ຽງຕົວເອງຕໍ່ການຕໍ່ສູ້ທັງສອງດ້ານ? ດາວິດທູນຖາມພຣະເຈົ້າເພື່ອຢາກຮູ້ວ່າລາວຄວນກະທຳຢ່າງໃດ? ດາວິດໄດ້ມອບຄວາມປອດພັຍຂອງລາວໄວ້ກັບພຣະເຈົ້າ. ບາງເທື່ອການຊ່ວງຊີງຂອງສະພາບແວດລ້ອມໄດ້ປິດບັງເຮົາບໍ່ໃຫ້ເຮົາພົບກັບນ້ຳພຣະທັຍຂອງພຣະເຈົ້າ. ແຕ່ພວກເຮົາຄວນສແວງຫາພຣະເຈົ້າກ່ອນເໜືອສິ່ງເຫຼົ່ານີ້.

ພຣະເຈົ້າໄດ້ຕອບຄຳອະທິຖາຂອງດາວິດໂດຍການໜູນໃຈໃຫ້ລາວໄດ້ໂຈມຕີຟີລິສຕິນ. ເມື່ອດາວິດໄດ້ບອກໃຫ້ທະຫານຂອງລາວ ພວກເຂົາກໍຖາມເຖິງສະຕິຂອງລາວ. ຖ້າວ່າພວກເຂົາມີບັນຫາກັບກະສັດຊາອູນ

ແລ້ວ, ພວກເຂົາກໍ່ຍິ່ງມີບັນຫາໜັກກັບຟີລິສຕິນແມ່ນແຕ່ກຳລັງທະຫານຂອງຊາອູນກໍຍັງມີຄວາມຢ້ານກົວຕໍ່ກຳລັງທຳຫານຂອງຟີລິສຕິນຢູ່ແລ້ວ.

ບາງເທື່ອຄົນທີ່ຢູ່ໃກ້ສິດກັບພວກເຮົາກໍບໍ່ອາດເຂົ້າໃຈຫຼືເຫັນພ້ອມກັບການຕັດສິນໃຈຂອງເຮົາ, ແຕ່ພວກເຮົາຕ້ອງມອບໝາຍສິ່ງເຫຼົ່ານັ້ນໄວ້ໃນທາງຂອງພຣະເຈົ້າ.

ດາວິດໄດ້ຟັງຄຳແນະນຳຂອງທະຫານຂອງລາວແລະລາວໄດ້ກັບໄປຄຶດໄປອະທິຖານອີກ. ລາວໄດ້ຖາມພຣະເຈົ້າເປັນເທື່ອທີສອງເພື່ອລາວຈະໄດ້ຮັບຄຳຕອບທີ່ແນ່ນອນຈາກພຣະເຈົ້າອີກ. ແທນທີ່ລາວຈະຟ້າວຕັດສິນໃຈວ່າອັນນັ້ນແມ່ນນ້ຳພຣະທັຍຂອງພຣະເຈົ້າ. ລາວໄດ້ໃຊ້ເວລາຢືນຢັນວ່ານັ້ນເປັນຄວາມຈິງເສັຽກ່ອນ. ຫຼາຍໆຄັ້ງ ພວກເຮົາຟ້າວຟັ່ງເຮັດຫຼາຍສິ່ງຫຼາຍຢ່າງ ຈົນເຮັດໃຫ້ເຮົາພາດຈາກນ້ຳພຣະທັຍຂອງພຣະເຈົ້າ.

ອົງພຣະເປັນເຈົ້າໄດ້ຢືນຢັນຕາມນ້ຳພຣະທັຍຂອງພຣະອົງອີກ. ໂດຍການບອກດາວິດໃຫ້ໄປເມືອງເກເອລາອີກ. ແຕ່ໃນເທື່ອນີ້ໄດ້ລວມທັງຄຳໝັ້ນສັນຍາວ່າພຣະອົງຈະມອບພວກຟີລິສຕິນໄວ້ໃນມືຂອງລາວ. ການອະທິຖານຂອງດາວິດໄດ້ໃຫ້ຜົນໃນຄວາມແນ່ນອນໃຈທີ່ລາວຕ້ອງເຮັດໃນສິ່ງທີ່ຖືກຕ້ອງ. ເມື່ອລາວກັບຈາກການອະທິຖານເທື່ອທີສອງ, ປະຊາຊົນກໍຕາມລາວໄປ. ພວກເຂົາບໍ່ພຽງແຕ່ຊະນະຕໍ່ສົງຄາມນັ້ນ, ແຕ່ພວດເຂົາຍັງໄດ້ນຳເອົາສັດລ້ຽງຂອງເຂົາໄປນຳດ້ວຍແລະກໍຂ້າຟັນເຂົາໃຫ້ຕາຍເປັນຈຳນວນມາກ.

ດາວິດໄດ້ເປັນແບບຢ່າງອັນດີໃນການສແວງຫານ້ຳພຣະທັຍຂອງພຣະເຈົ້າ ລາວໄດ້ສແວງຫາດ້ວຍການອະທິຖານ, ແລະຮັບຟັງຄຳປຶກສາຈາກຜູ້ອື່ນ. ເພາະວ່າເຂົາໄດ້ຖາມເຖິງພຣະຄຳຂອງພຣະເຈົ້າເພື່ອລາວ. ດາວິດໄດ້ກັບໄປອະທິຖານອີກ, ເພື່ອຄວາມໝັ້ນໃຈວ່າການກະທຳຂອງລາວຈະຖືກຕ້ອງຕາມພຣະປະສົງຂອງພຣະເຈົ້າຫຼືບໍ່. ພວກເຮົາກໍຄືກັນພວກເຮົາສາມາດເຮັດສິ່ງເຫຼົ່ານີ້ໄດ້ໂດຍການອ່ານພຣະຄັມພີ, ອະທິຖານ, ແລະຊອກຫາຄຳປຶກສາຈາກຄົນຂອງພຣະເຈົ້າ.

**<u>3.ພຣະເຈົ້າເປັນຜູ້ຈັດຫາໃຫ້</u>** 1 ຊາມູເອນ 23: 6, 9-13

ເພາະວ່າອາບີອາທາໜີໄປອາສັຍຢູ່ນຳດາວິດທີ່ເມືອງກາລີອາ, ດາວິດມີຄວາມສາມາດທີ່ຈະໃຊ້ເສື້ອຄຸມສັ້ນເອໂຟດ. ນັກສຶກສາຝ່າຍພຣະຄັມພີໄດ້ເຊື່ອວ່າເສື້ອຄຸມສັ້ນເອໂຟດນັ້ນມີຖົງໃສ່ອຸລິມແລະທູມມີ ວັດຖຸທັງສອງຊະນິດນີ້ຈະບົ່ງບອກໃຫ້ປະໂລຫິດຮູ້ເຖິງພຣະປະສົງຂອງພຣະເຈົ້າ.

ເມື່ອເວລາໃດເຮົາຍອມຮັບໃຊ້ຜູ້ອື່ນ, ເຮົາຄວນພ້ອມແລ້ວທີ່ຈະສະລະຄວາມສຸກຂອງເຮົາ.

ຜູ້ຕິດຕາມດາວິດມີຈຳນວນຫຼາຍຂຶ້ນແລະດາວິດກໍຮູ້ວ່າຊາອູນໄດ້ມີແຜນປອງຮ້າຍລາວ. ດາວິດຈຶ່ງຮຽກຮ້ອງເຖິງເສື້ອຄຸມເອໂຟດແລະການອະທິຖານສແວງຫານ້ຳພຣະທັຍຂອງພຣະເຈົ້າ. ດາວິດມີສອງຄຳຖາມ. <u>ອັນທີນຶ່ງ</u>ກໍຄືການທີ່ຊາອູນໄດ້ຕິດຕາມລາວມາເມືອງເກລີອາຫຼືບໍ່? ລາວໄດ້ຍິນຂ່າວວ່າຊາອູນກຳລັງເດີນທາງມາເພື່ອຈະທຳຮ້າຍເມືອງນີ້ເພາະເຂົາໄດ້ໃຫ້ດາວິດອາສັຍຢູ່ໃນເມືອງນີ້. ຄຳຖາມ<u>ອັນທີສອງ</u>ກໍຄືລາວຕ້ອງການຢາກຮູ້ວ່າຊາວເມືອງເກລີອາຈະມອບລາວໃຫ້ກັບກະສັດຊາອູນຫຼືບໍ່?

ພຣະຜູ້ເປັນເຈົ້າໄດ້ເປີດເຜີຍຄຳຕອບທັງສອງທີ່ດາວິດໄດ້ຖາມນັ້ນ. ຊາອູນຈະມາເມືອງເກລີອາແລະຊາວເມືອງເກລີອາຈະມອບລາວໃຫ້ກັບຊາອູນ. ດາວິດຈຶ່ງຕັດສິນໃຈອອກຈາກເມືອງເກລີອາໃນທັນທີແລະໄດ້ຊ່ວຍຊີວິດຫຼາຍໆຄົນໃນທີ່ນັ້ນ. ຊາອູນໄດ້ເລີກລົ້ມຄວາມຕັ້ງໃຈຂອງລາວເສັຽ. ການກະທຳຂອງດາວິດໄດ້ນຳພຣະພອນມາສູ່ຄົນໃນເມືອງເກລີອາເຖິງແມ່ນວ່າດາວິດໄດ້ກັບໄປໃນຖິ່ນກັນດານກໍຕາມ.

ນ້ຳພຣະທັຍຂອງພຣະເຈົ້ານັ້ນກໍຄືໃຫ້ເຮົາຮັບໃຊ້ຄົນອື່ນນັ້ນຫຼາຍກ່າວທີ່ຈະຮັບພຣະພອນເປັນການສວນຕົວ ການເຊື່ອຟັງນັ້ນເປັນການຮຽກເອີ້ນອັນຍິ່ງໃຫຍ່ຂອງພຣະເຈົ້າ.

## ບົດຮຽນແຫ່ງຊີວິດ:

ດາວິດໄດ້ມີຄຳໝັ້ນສັນຍາທີ່ຈະສແຫວງຫານ້ຳພຣະທັຍຂອງພຣະເຈົ້າ ກ່ອນທີ່ລາວຈະຕັດສິນໃຈໃນບັນຫາໃຫຍ່ໆໃນຊີວິດຂອງລາວ, ແລະພວກທະຫານຂອງລາວ. ລາວສແວງຫາຄຳຕອບຈາກພຣະເຈົ້າແລະຍອມຟັງຜູ້ທີ່ຢູ່ອ້ອມໆລາວເປັນການດຳເນີນໃນການຕັດສິນໃຈຂອງລາວ. ລາວຈະບໍ່ໃຫ້ຄວາມຄິດເຫັນຂອງຜູ້ອື່ນມາຊັກຈູງລາວ, ເຖິງແມ່ນວ່າຄຳແນະນຳນັ້ນຈະມາຈາກຜູ້ມີຄວາມຫວັງດີກໍຕາມລາວກໍຈະນຳມາພິຈາຣະນາຢ່າງລະມັດລະວັງ.

ຊີວິດຂອງດາວິດໄດ້ສອນເຮົາຫຍັງແດ່ໃນການສແວງຫາພຣະເຈົ້າແລະຕິດຕາມນ້ຳພຣະທັຍຂອງພຣະອົງ.

- ບາງຄັ້ງນ້ຳພຣະທັຍຂອງພຣະເຈົ້ານັ້ນປະກອບດ້ວຍຄວາມເຈັບປວດອາດຈະເປັນພາກສ່ວນນຶ່ງຂອງເຮົາເອງຫຼືວ່າອາດຈະເປັນສ່ວນນຶ່ງຂອງຜູ້ທີ່ຢູ່ອ້ອມຂ້າງເຮົາ.
- ກ່ອນພວກເຮົາຈະຕັດສິນໃຈເຮັດອັນໃດອັນນຶ່ງເຮົາຄວນສແວງຫານ້ຳພຣະທັຍຂອງພຣະເຈົ້າຢ່າງລະມັດລະວັງເສັຽກ່ອນ, ບາງຄັ້ງຕ້ອງລໍຖ້າດ້ວຍຄວາມອົດທົນຈົນກວ່າຈະໄດ້ຮັບຄຳຕອບຈາກພຣະເຈົ້າ.
- ຢ່າງດຽວກັນກັບເວລາເຮົາຈະຕັດສິນໃຈໃຫ້ຖືກຕາມນ້ຳພຣະທັຍຂອງພຣະເຈົ້າ, ເຮົາຄວນພິຈາຣະນາແລະຄຳນຶງເຖິງຄວາມຕ້ອງການຂອງຜູ້ທີ່ຢູ່ອ້ອມຂ້າງພວກເຮົາເໝືອນກັນກັບຄວາມປາດຖນາແລະຄວາມຕ້ອງການຂອງເຮົາເອງ.
- ຫຼັງຈາກພວກເຮົາໄດ້ຕັດສິນໃຈຕາມນ້ຳພຣະທັຍຂອງພຣະເຈົ້າແລ້ວ, ໂດຍສະເພາະແລ້ວເປັນສະຖານະການພິເສດ, ພວກເຮົາບໍ່ຄວນຈະຊັກຊ້າຕ້ອງປະຕິບັດທັນທີ,

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ WWW.lsbf.org ໂດຍ LLBC.